# ບົດຂ່າວ

## ພິທີເຊັນສັນຍາການຮ່ວມມືລະຫວ່າງ ທຄຕລ ແລະ ບໍລິສັດ ໄທເອັສ ເຊົ່າສິນເຊື່ອ (ລາວ) ຈຳກັດ ວ່າດ້ວຍການຊຳລະສະສາງຄ່າບໍລິການຕ່າງໆຜ່ານ ທຄຕລ.




ໃນວັນທີ 10 ກໍລະກົດ 2017 ທີ່ຜ່ານມາ, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ແລະ ບໍລິສັດ ໄທເອັສ ເຊົ່າສິນເຊື່ອ (ລາວ) ຈຳກັດ ໄດ້ຈັດພິທີເຊັນສັນຍາການຮ່ວມມື ວ່າດ້ວຍການຊຳລະສະສາງຄ່າບໍລິການຕ່າງໆຜ່ານ ທຄຕລ.ການລົງນາມໃນຄັ້ງນີ້ ແມ່ນລົງນາມໂດຍ: ທ່ານ ພັນຊະນະ ຄູນນຸວົງ, ຮອງຜູ້ອຳນວຍການ, ທຄຕລ ແລະ ທ່ານ ໄກວິດ ເຕຊະວິດທະຍະປະກອບ, ຜູ້ອຳນວຍການບໍລິສັດ ໄທເອສ ເຊົ່າສິນເຊື່ອ (ລາວ) ຈຳກັດ ໂດຍການໃຫ້ກຽດເຂົ້າຮ່ວມເປັນສັກຂີພະຍານໃນພິທີລົງນາມໃນຄັ້ງນີ້ ປະກອບມີ: ຄະນະອຳນວຍການ ທຄຕລ, ຄະນະຜູ້ແທນຈາກ ບໍລິສັດ ໄທເອສ ເຊົ່າສິນເຊື່ອ (ລາວ) ຈຳກັດ, ຄະນະພະແນກ, ຄະນະສູນ, ຄະນະສາຂາ ຂອງ ທຄຕລ ແລະ ຕະຫລອດຮອດພະນັກງານຂອງທັງຝ່າຍ.

ສັນຍາວ່າດ້ວຍການຮ່ວມມືການຊຳລະຄ່າບໍລິການຕ່າງໆຜ່ານ ທຄຕລ ລະຫວ່າງ ທຄຕລ ແລະ ບໍລິສັດ ໄທເອສ ເຊົ່າສິນເຊື່ອ (ລາວ) ຈຳກັດ ແມ່ນເພື່ອອຳນວຍຄວາມສະດວກດ້ານການຊຳລະຄ່າງວດເຊົ່າສິນເຊື່ອຂອງບັນດາລູກຄ້າ ບໍລິສັດ ໄທເອັສ ເຊົ່າສິນເຊື່ອ (ລາວ) ຈຳກັດ ຜ່ານ ທຄຕລ, ເຊິ່ງໃນເບື້ອງຕົ້ນແມ່ນສາມາດຊຳລະຜ່ານເຄົາເຕີ້ (Counter) ຈຸດບໍລິການແມ່ນ: ສຳນັກງານໃຫຍ່ ທຄຕລ, ບັນດາສາຂາ ແລະ ໜ່ວຍບໍລິການທົ່ວລະບົບ ທຄຕລ, ຜ່ານມືຖືດ້ວຍ BCEL One ແລະ ອິນເຕີເນັດແບງຄິງ BCEL I-Bank. ໃນອະນາຄົດ ທຄຕລ ຈະມີການພັດທະນາໃຫ້ສາມາດ ຊຳລະຜ່ານຕູ້ ATM ແລະ SMS Banking.




ທ່ານ ພັນຊະນະ ຄູນນຸວົງ, ຮອງຜູ້ອຳນວຍການ, ທຄຕລ ໄດ້ກ່າວວ່າ: ໃນນາມທີ່ ທຄຕລ ເປັນທະນາຄານທຸລະກິດ ໃນແຖວໜ້າ ຂອງ ສ.ປ.ປ ລາວ, ທະນາຄານແມ່ນມີຄວາມພ້ອມຫລາຍດ້ານໃນການໃຫ້ບໍລິການແກ່ລູກຄ້າທຸກທ່ານ ລວມທັງລູກຄ້າຂອງທາງບໍລິສັດໄທເອສ ເຊົ່າສິນເຊື່ອ (ລາວ) ຈຳກັດ. ປະຈຸບັນ, ທຄຕລ ມີ 19 ສາຂາ, 82 ໜ່ວຍບໍລິການ, 15 ຫ້ອງແລກປ່ຽນ, ມີຕູ້ ATM 344 ເຄື່ອງທົ່ວປະເທດ, ທະນາຄານມີການນຳໃຊ້ເຕັກໂນໂລ ຍີທີ່ທັນສະໄໝເຂົ້າ ໃນການບໍລິການ ໃຫ້ມີຄວາມທັນສະໄໝ, ອິນເຕີເນັດແບງຄິງ ຄື: BCEL One ແລະ BCEL i-Bank ເພື່ອອຳນວຍຄວາມສະດວກໃນການຊຳລະສາງ ແລະ ການເຮັດທຸລະກຳການເງິນຕ່າງໆໂດຍ ລູກຄ້າໄດ້ເອງ ບໍ່ຈຳເປັນຕ້ອງເຂົ້າມາທະນາຄານ. ທຄຕລ ຂໍສະແດງຄວາມຂອບໃຈມາຍັງ ບໍລິສັດ ໄທເອັສ ເຊົ່າສິນເຊື່ອ (ລາວ) ຈຳກັດ ທີ່ໄດ້ໃຫ້ຄວາມເຊື່ອໝັ້ນ ແລະ ເລືອກໃຊ້ບໍລິການຂອງ ທຄຕລ. ທຄຕລ ສັນຍາວ່າຈະໃຫ້ບໍລິການຢ່າງດີ ທີ່ສຸດ.

ທ່ານ ໄກວິດ ເຕຊະວິດທະຍະປະກອນ, ຜູ້ອຳນວຍການບໍລິສັດ ໄທເອສ ເຊົ່າສິນເຊື່ອ (ລາວ) ຈຳກັດ ໄດ້ກ່າວວ່າ: ບໍລິສັດ ໄທເອສ ເຊົ່າສິນເຊື່ອ (ລາວ) ຈຳກັດ ໄດ້ເປີດໃຫ້ບໍລິການດ້ານເຊົ່າສິນຊື່ອຢ່າງເປັນທາງການຕັ້ງແຕ່ວັນທີ 19 ພະຈິກ 2015 ທີ່ຜ່ານມາ. ບໍລິສັດມີຜະລິດຕະພັນບໍລິການແກ່ພໍ່ແມ່ປະຊາຊົນ ໃນຂອບເຂດນະຄອນຫຼວງວຽງຈັນ ເຊັ່ນ: ສິນເຊື່ອສຳລັບລົດໃຫຍ່, ລົດຈັກ, ມືຖື ແລະ ເຄື່ອງໃຊ້ໄຟຟ້າ. ປະຈຸບັນ ລູກຄ້າຂອງບໍລິສັດນັບມື້ນັບເພີ່ມຂຶ້ນ. ສະນັ້ນ, ບໍລິສັດຈຶ່ງໄດ້ຮ່ວມມືກັບ ທຄຕລ ເພື່ອເພີ່ມຄວາມຫລາກຫລາຍ ໃຫ້ລູກຄ້າໃນການເລືອກ ຊຳລະຄ່າງວດ ເຊົ່າສິນເຊື່ອຜ່ານລະບົບທະນາຄານຂອງ ທຄຕລ. ທ່ານເຊື່ອວ່າ, ການຊຳລະສະສາງທີ່ສະດວກສະບາຍ ກໍ່ເປັນອີກເຫດ ຜົນໜຶ່ງທີ່ສຳຄັນໃນການຕັດສິນໃຈເລືອກໃຊ້ບໍລິການເຊົ່າສິນເຊື່ອຂອງລູກຄ້າດ້ວຍ ແລະ ບໍລິສັດເຊື່ອວ່າ ການຮ່ວມມືກັບ ທຄຕລ ຈະຊ່ວຍ ໃຫ້ລູກຄ້າຫັນມາໃຊ້ບໍລິການຂອງບໍລິສັດຫລາຍຂຶ້ນ. ທ່ານ ໄກວິດ ຍັງໄດ້ກ່າວຂອບໃຈ ຕໍ່ ທຄຕລ ທີ່ໃຫ້ຄວາມຮ່ວມມືເພື່ອ ໃຫ້ບໍລິການແກ່ລູກຄ້າຂອງບໍລິສັດ, ທາງບໍລິສັດເອງກໍ່ຈະຊຸກຍູ້ໃຫ້ລູກຄ້າຂອງ ບໍລິສັດຊຳລະຄ່າງວດຜ່ານທາງ ທຄຕລ ໃຫ້ຫລາຍຂຶ້ນ.

ວັນທີ 14 ກໍລະກົດ 2017, ຂ່າວໂດຍ: ກອງເລຂາ ແລະ ພົວພັນສາກົນ
ພາບໂດຍ: ທ້າວ ວິຊາຕີ ພົມປັນຍາ